# ຄຳຖາມເຣື່ອງເງື່ອນໄຂໄດ້ຮັບຂອງ **Apple Health** ທີ່ຖືກຖາມກັນຢູ່ເລື້ອຍໆກ່ຽວກັບໂຣກ **COVID-19**

1. **ຂ້າພະເຈົ້າຕົກຢູ່ໃນການສ່ຽງທີ່ຈະສູນເສັຽການຄຸ້ມກັນ Apple Health (Medicaid) ຂອງຂ້າພະເຈົ້າບໍ່ໃນຣະຫວ່າງການແຜ່ພາຍໂຣກຣະບາດ COVID-19?**

   Health Care Authority (HCA) ແລະ ຫ້ອງການຮ່ວມງານຂອງເຂົາເຈົ້າຈະຢຸດການຕັດການຄຸ້ມກັນສຳລັບຜູ້ຮັບ Apple Health ທຸກໆຄົນນອກຈາກວ່າບຸກຄົນ:

   - ຮ້ອງຂໍເອົາການຕັດ;
   - ບໍ່ແມ່ນພົລເມືອງຂອງຣັດວໍຊິງຕັນຕໍ່ໄປອີກແລ້ວ; ຫລື
   - ໄດ້ເສັຽຊີວິດແລ້ວ

2. **ຂ້າພະເຈົ້າໄດ້ຮັບໜັງສືບອກວ່າການຄຸ້ມກັນຂອງຂ້າພະເຈົ້າໄດ້ຖືກປິດຍ້ອນບໍ່ມີການຕໍ່ໃໝ່. ຂ້າພະເຈົ້າຈະເຮັດໃຫ້ການຄຸ້ມກັນຂອງຂ້າພະເຈົ້າເປີດຄືນຄືເກົ່າໄດ້ຢ່າງໃດ?**

   ຖ້າຫາກວ່າການຄຸ້ມກັນການປິ່ນປົວສຸຂະພາບຂອງທ່ານໄດ້ຖືກປິດລົງຍ້ອນບໍ່ມີການຕໍ່ໃໝ່, ພະນັກງານເງື່ອນໄຂຮັບເອົາຂອງ HCA ຈະເປີດມັນຄືນໃຫ້. ທ່ານຈະໄດ້ຮັບໜັງສືຢືນຢັນເຣື່ອງນີ້.ຖ້າຫາກວ່າທ່ານມີຄຳຖາມແນວໃດ ຫລື ວ່າການຄຸ້ມກັນຂອງທ່ານຍັງບໍ່ທັນຖືກເປີດໃຫ້ຄືນເທື່ອ, ໃຫ້ໂທຫາເລກ 1-800-562-3022.

3. **ຂ້າພະເຈົ້າຍັງຈະຕ້ອງການທີ່ຈະສົ່ງຫລັກຖານພິສູດມາໃຫ້ຢູ່ບໍ່ສຳລັບຄຳຮ້ອງຂໍເອົາການຄຸ້ມກັນຍ້ອນຄືນຫລັງຂອງຂ້າພະເຈົ້າ?**

   ຖ້າຫາກວ່າທ່ານບໍ່ສາມາດທີ່ຈະສົ່ງຫລັກຖານຂອງຣາຍໄດ້ເຂົ້າມາຍ້ອນໂຣກ COVID-19, HCA ຈະຮັບເອົາການຢືນຢັນວ່າແມ່ນແທ້ໂດຍຕົນເອງກ່ຽວກັບຣາຍໄດ້ສຳລັບເງື່ອນໄຂຮັບເອົາຂອງການຄຸ້ມກັນຍ້ອນຄືນຫລັງເລີ້ມຕົ້ນຕັ້ງແຕ່ເດືອນເຟບຣູຣີ 2020 ແລະ ສຳລັບແຕ່ລະເດືອນທີ່ສະທ້ອນເຖິງໂດຍໂຣກ COVID-19.

4. **ຂ້າພະເຈົ້າສາມາດຮ້ອງຂໍເອົາການຕໍ່ເວລາອອກໄປບໍ່ສຳລັບຣາຍຣະອຽດທີ່ຕ້ອງໄດ້ສົ່ງມາໃຫ້ HCA ຫລື ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ (Department of Social and Health Services) (DSHS)?**

   ແມ່ນ. ພວກເຮົາຈະອະນຸຍາດໃຫ້ 30 ວັນເພີ້ມເຕີມອີກເພື່ອຈະສົ່ງຣາຍຣະອຽດທີ່ຖືກຮ້ອງຂໍເອົາເຂົ້າມາ.ທ່ານຈະຕິດຕໍ່ຫາ HCA ໄດ້ທີ່ເລກ 1-800-562-3022 ຫລືກົມ DSHS ໄດ້ທີ່ເລກ 1-877-501-2233.

5. **ການລາຍງານໃນການປ່ຽນແປງຍັງຈະຕ້ອງໄດ້ເຮັດຢູ່ບໍ່?**

   ແມ່ນ. ຖ້າຫາກວ່າທ່ານບໍ່ໄດ້ຮັບຣາຍໄດ້ຕໍ່ໄປອີກແລ້ວ ຫລື ບໍ່ມີຣາຍໄດ້ໄປສູ່ການຕົກງານ, ທ່ານຕ້ອງໄດ້ລາຍງານການປ່ຽນແປງໂດຍການດັດແປງແກ້ໄຂໃສ່ໃບຄຳຮ້ອງຂໍຂອງທ່ານ.

6. **ຂ້າພະເຈົ້າກຳລັງໄດ້ຮັບການຄຸ້ມກັນ Apple Health ຢູ່ ແລະ ດຽວນີ້ຂ້າພະເຈົ້າຖືພາຕັ້ງທ້ອງ. ຂ້າພະເຈົ້າຕ້ອງໄດ້ລາຍງານການຖືພາຕັ້ງທ້ອງຂອງຂ້າພະເຈົ້າບໍ່?**

   ແມ່ນ. ທ່ານຄວນຈະລາຍງານການຖືພາຕັ້ງທ້ອງຂອງທ່ານ.

**7. ຂ້າພະເຈົ້າກຳລັງໄດ້ຮັບການຄຸ້ມກັນ Apple Health ຢູ່ແລ້ວ; ຂ້າພະເຈົ້າຕ້ອງໄດ້ລາຍງານເງິນວ່າງງານ ຫລື ສະວັດດີການເງິນວ່າງງານເພີ້ມເຕີມປະຈຳອາທິດບໍ່?**

- ເງິນສະວັດດີການປະຈຳອາທິດພື້ນຖານສຳລັບເງິນວ່າງງານ:ແມ່ນ,ເຈົ້າຕ້ອງໄດ້ລາຍງານລາຍໄດ້ອັນນີ້
- ເງິນສະວັດດີການປະຈຳອາທິດເພີ້ມເຕີມ:ບໍ່,ຢ່າສູ່ລາຍງານເງິນວ່າງງານປະຈຳອາທິດ

**8. ຂ້າພະເຈົ້າໄດ້ຮັບເຊັກເງິນອຸ້ມຊູປຽວຢາຂອງຣັດຖະບານກາງ. ຂ້າພະເຈົ້າຕ້ອງໄດ້ລາຍງານລາຍໄດ້ອັນນີ້ບໍ່?**

ບໍ່. ຢ່າສູ່ລາຍງານເຊັກເງິນອຸ້ມຊູປຽວຢາຂອງທ່ານໄປຫາ Washington Healthplanfinder. ເງິນອຸ້ມຊູປຽວຢາຈະບໍ່ຖືກຄິດໄລ່ເອົາສຳລັບ Apple Health.

**9. ເງິນຈ່າຍເຄຣດິດພາສີເດັກນ້ອຍລ່ວງຫນ້າເລີ້ມຕົ້ນເດືອນຈຸນລາຍ 15, 2021. ຂ້າພະເຈົ້າຈະຕ້ອງໄດ້ລາຍງານລາຍໄດ້ອັນນີ້ບໍ່**

ບໍ່. ຢ່າສູ່ລາຍງານເງິນຈ່າຍເຄຣດິດພາສີເດັກນ້ອຍລ່ວງຫນ້າປະຈຳເດືອນຂອງທ່ານໃຫ້ Washington Healthplanfinder. ການຈ່າຍເງິນເຫລົ່ານີ້ບໍ່ຖືກໄລ່ເອົາສຳລັບ Apple Health.

**10. ຂ້າພະເຈົ້າບໍ່ແມ່ນພົລເມືອງຂອງຣັດວໍຊິງຕັນ, ແຕ່ວ່າໄດ້ເດີນທາງມາທີ່ນີ້ ແລະ ດຽວນີ້ບໍ່ສະບາຍ ແລະ ຢູ່ໃນການກັກຮັກສາຕົວປ້ອງກັນການແຜ່ພາຍໂຣກ. ຂ້າພະເຈົ້າສາມາດຮ້ອງຂໍເອົາໂຄງການ Apple Health ສຳລັບການກວດເບິ່ງໂຣກ ແລະ/ຫລື ການປິ່ນປົວໂຣກສຳລັບໂຣກ COVID-19?**

ຖ້າຫາກວ່າທ່ານກັກຮັກສາຕົວປ້ອງກັນການແຜ່ພາຍໂຣກຢູ່ໃນຣັດວໍຊິງຕັນ, ທ່ານຈະມີເງື່ອນໄຂໄດ້ຮັບການຄຸ້ມກັນ ແລະ ການປິ່ນປົວໂຣກ COVID-19. ກະຣຸນາໂທຫາ HCA ໄດ້ທີ່ເລກ 1-800-562-3022 ເພື່ອລາຍຣະອຽດເພີ້ມເຕີມ.

**11. ຂ້າພະເຈົ້າໄດ້ຮັບການຄຸ້ມກັນໂດຍຜ່ານກົມ DSHS ແລະ ຕາມທັມມະດາແລ້ວຕ້ອງໄດ້ສົ່ງມາໃຫ້ຫລັກຖານຂອງລາຍໄດ້ ຫລື ໃບແຈ້ງການຈາກທະນາຄານ. ຂ້າພະເຈົ້າຍັງຈະຕ້ອງໄດ້ສົ່ງລາຍຣະອຽດອັນນີ້ມາໃຫ້ຢູ່ບໍ່ ໂດຍທາງເປັນເຈັ້ຽເອກສານ?**

ບໍ່, ແຕ່ວ່າທ່ານສາມາດຢືນຢັນວ່າແມ່ນແທ້ໂດຍຕົນເອງກ່ຽວກັບລາຍໄດ້ ແລະ ຊັບສິນຂອງທ່ານເມື່ອເວລາຮ້ອງຂໍເອົາ, ຕໍ່ໃຫມ່ ຫລື ລາຍງານການປ່ຽນແປງ. ທ່ານຈະໂທຫາກົມ DSHS ໄດ້ທີ່ເລກ 1-877-501-2233 ເພື່ອຈະລາຍງານລາຍຣະອຽດຂອງທ່ານ.

**12. ຂ້າພະເຈົ້າໄດ້ຮັບການກວດເບິ່ງໂຣກ COVID-19 ຢູ່ສະຖານທີ່ບໍຣິດຜ່ານແລະໄດ້ຮ້ອງຂໍເອົາການຄຸ້ມກັນພະຍາບານສຸກເສີນສຳລັບຄົນຕ່າງດ້າວ (AEM). ເອກສານແນວໃດແດ່ທີ່ຂ້າພະເຈົ້າຕ້ອງການທີ່ຈະຍື່ນເຂົ້າມາ?**

ບ່ອນກວດເບິ່ງໂຣກແຕ່ລະບ່ອນຈະເອົາເອກສານບັນທຶກແຕກຕ່າງກັນໃຫ້. ສິ່ງເຂົ້າມາບໍ່ວ່າເອກສານແນວໃດທີ່ທ່ານໄດ້ຮັບທີ່ສະແດງໃຫ້ເຫັນວ່າທ່ານໄດ້ຖືກກວດເບິ່ງໂຣກ COVID-19 ແລ້ວ. ທ່ານຍັງຈະຕ້ອງໄດ້ເອົາໃຫ້ອີກຄືກັນຕາຕະລາງ ແລະ/ຫລື ບັນທຶກຂອງການປິ່ນປົວຕ່າງໆ. ບັນທຶກເອກສານທຸກໆຢ່າງທີ່ທ່ານໄດ້ຮັບຈາກທ່ານຫມໍຂອງທ່ານວ່າເປັນຫລັກຖານຂອງການກວດເບິ່ງໂຣກຂອງທ່ານຈະຖືກຮັບເອົາໄດ້.